ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງໄຊຍະບຸລີ

ເລກທີ 13 /ສພຂ.ຊຍ
ໄຊຍະບຸລີ, ວັນທີ 17 ເມສາ 2026

# ມະຕິ
## ກອງປະຊຸມສະພາປະຊາຊົນແຂວງ
## ວ່າດ້ວຍ ການຮັບຮອງເອົາແຜນການເຄື່ອນໄຫວວຽກງານ 5 ປີ (2026-2030)
## ຂອງອົງການກວດສອບປະຈໍາພາກເໜືອ 1

- ອີງຕາມ ມາດຕາ 53 ຂອງກົດໝາຍວ່າດ້ວຍ ສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ) ສະບັບເລກທີ 57/ສພຊ, ລົງວັນທີ 28 ມິຖຸນາ 2024.
- ອີງຕາມ ບົດລາຍງານຂອງອົງການກວດສອບປະຈໍາພາກເໜືອ 1 ສະບັບເລກທີ 134/ອກສ.ພໜ 1, ລົງວັນທີ 2 ເມສາ 2026 ຕໍ່ກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາປະຊາຊົນແຂວງ ຊຸດທີ V, ໃນວັນທີ 9 ເມສາ 2026.

ຜ່ານການປະກອບຄໍາເຫັນ, ຄົ້ນຄວ້າ ແລະ ພິຈາລະນາຢ່າງເລິກເຊິ່ງ ຂອງສະມາຊິກສະພາປະຊາຊົນແຂວງ ຕໍ່ບົດລາຍງານ ກ່ຽວກັບແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງອົງການກວດສອບປະຈໍາພາກເໜືອ 1. ໃນກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາປະຊາຊົນແຂວງ ຊຸດທີ V ລະຫວ່າງ ວັນທີ 9-10 ເມສາ 2026.

## ກອງປະຊຸມຕົກລົງ:

**ມາດຕາ 1: ຮັບຮອງເອົາແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງອົງການກວດສອບ ປະຈໍາພາກເໜືອ 1**

ກອງປະຊຸມ ເຫັນດີເປັນເອກະພາບ ຮັບຮອງເອົາແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງອົງການກວດສອບປະຈໍາພາກເໜືອ 1 ທີ່ໄດ້ກໍານົດ 6 ທິດທາງລວມ, 9 ຄາດໝາຍສູ້ຊົນ ແລະ 6 ແຜນວຽກຈຸດສຸມ. ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດວຽກງານ ຂອງອົງການກວດສອບປະຈໍາພາກເໜືອ 1 ໃຫ້ໄດ້ຮັບຜົນສໍາເລັດຕາມຈຸດປະສົງ ແລະ ລະດັບຄາດໝາຍ. ກອງປະຊຸມສະເໜີໃຫ້ເອົາໃຈໃສ່ບາງມາດຕະການເພີ່ມເຕີມ ດັ່ງນີ້:

1. ເອົາໃຈໃສ່ປະຕິບັດກົດໝາຍ ວ່າດ້ວຍການກວດສອບແຫ່ງລັດໃຫ້ເປັນຜົນສັກສິດ, ຜັນຂະຫຍາຍບາງມາດຕາຂອງກົດໝາຍວ່າດ້ວຍການກວດສອບແຫ່ງລັດ ເປັນນິຕິກໍາໃຕ້ກົດໝາຍໃຫ້ຄົບຖ້ວນ ແລະ ມີເນື້ອໃນຮັດກຸມ ເພື່ອເປັນບ່ອນອີງໃຫ້ແກ່ການເຄື່ອນໄຫວວຽກງານ.
2. ສືບຕໍ່ປັບປຸງກົງຈັກການຈັດຕັ້ງແຕ່ລະຂັ້ນ ແລະ ແກ້ໄຂວຽກງານກວດສອບໃຫ້ດີຂຶ້ນ ດ້ວຍການຖອດຖອນບົດຮຽນ ເພື່ອເສີມຂະຫຍາຍຈຸດດີ, ແກ້ໄຂຈຸດອ່ອນ ແລະ ຂໍ້ຄົງຄ້າງ ໂດຍສະເພາະການຕິດຕາມ



สแกนด้วย CamScanner

ຊຸກຍູ້ແກ້ໄຂຜົນການກວດສອບ ແລະ ການເກັບກູ້ຄືນລາຍຮັບກວດສອບເຫັນເພີ່ມ ທີ່ຍັງຄ້າງໃນໄລຍະຜ່ານມາໃຫ້ສຳເລັດ.

3. ຕ້ອງເພີ່ມທະວີການ ນຳພາ-ຊີ້ນຳ ຕໍ່ການເຄື່ອນໄຫວ ຊຸກຍູ້, ຕິດຕາມກວດກາ, ສະຫຼຸບຕີລາຄາ ແລະ ຖອດຖອນບົດຮຽນ ແຕ່ລະໄລຍະ ໃຫ້ເປັນປົກກະຕິ ແລະ ຕໍ່ເນື່ອງ.
4. ສືບຕໍ່ເອົາໃຈໃສ່ບຳລຸງກໍ່ສ້າງພະນັກງານ-ລັດຖະກອນ, ນັກກວດສອບ ໃຫ້ມີຄວາມເຂັ້ມແຂງ, ມີການເລືອກເຟັ້ນ, ສັບຊ້ອນ-ຈັດວາງຢ່າງເປັນລະບົບ ດ້ວຍການຍົກສູງຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດທັງໃຫ້ມີຈັນຍາບັນ, ຈັນຍາທຳ, ສັດຊື່ບໍລິສຸດ ມີຄວາມຊຳນານດ້ານວິຊາການ ແລະ ເປັນມືອາຊີບ.
5. ເພີ່ມທະວີການປະສານງານລະຫວ່າງ ອົງການກວດສອບປະຈຳພາກເໜືອ 1 ກັບ ສະພາປະຊາຊົນແຂວງ, ອົງການກວດກາລັດແຂວງ, ຫົວໜ່ວຍງົບປະມານ ແລະ ພາກສ່ວນທີ່ກ່ຽວຂ້ອງຂັ້ນແຂວງ ແລະ ຂັ້ນເມືອງ ໃຫ້ໂລ່ງລ່ຽນ ແລະ ເປັນເອກະພາບກັນ ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດ ໜ້າທີ່ວຽກງານໃຫ້ວ່ອງໄວ ແລະ ມີປະສິດທິຜົນ.
6. ເພີ່ມທະວີການກວດສອບການຈັດເກັບງົບປະມານ, ສ່ວຍສາອາກອນ, ລາຍຮັບທີ່ດິນ, ລາຍຮັບວິຊາການ, ລາຍຮັບຊັບສິນ, ວິສາຫະກິດຂອງລັດ, ໂຄງການລົງທຶນຂອງລັດ, ກວດສອບການຄຸ້ມຄອງລາຍຈ່າຍ ຍົກສູງປະສິດທິຜົນການລົງທຶນ-ລາຍຈ່າຍງົບປະມານ ການແກ້ໄຂໜີ້ສິນ ແລະ ອື່ນໆ.
7. ນຳໃຊ້ເຄື່ອງມືທັນສະໄໝ, ເຕັກໂນໂລຊີ ແລະ ນະວັດຕະກຳໃໝ່ ປັນຍາປະດິດ (AI) ເຂົ້າໃນການກວດສອບ ວິເຄາະ-ວິໄຈຂໍ້ມູນ ເພື່ອເພີ່ມປະສິດທິພາບໃນການດຳເນີນງານ ໃຫ້ການກວດສອບມີຄວາມວ່ອງໄວ, ຊັດເຈນ, ມີປະສິດທິພາບ, ທັງປະຢັດເວລາ ແລະ ງົບປະມານ.

**ມາດຕາ 2: ຮັບຮອງເອົາບັນດາມາດຕະການຈັດຕັ້ງປະຕິບັດ ຂອງອົງການກວດສອບປະຈຳພາກເໜືອ 1.**

ກອງປະຊຸມ ເຫັນດີຮັບຮອງເອົາ 5 ມາດຕະການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຕາມການສະເໜີຂອງອົງການກວດສອບປະຈຳພາກເໜືອ 1. ເພື່ອເຮັດໃຫ້ແຜນການເຄື່ອນໄຫວວຽກງານ ຂອງອົງການກວດສອບປະຈຳພາກເໜືອ 1 ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິພາບ ແລະ ປະສິດທິຜົນ ກອງປະຊຸມສະເໜີໃຫ້ເອົາໃຈໃສ່ບາງມາດຕະການເພີ່ມເຕີມດັ່ງນີ້:

1. ສືບຕໍ່ຜັນຂະຫຍາຍບັນດານິຕິກຳຂອງອົງການກວດສອບແຫ່ງລັດ ໃຫ້ເປັນນິຕິກຳອັນສະເພາະ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານໃຫ້ມີຄວາມຊັດເຈນ ແລະ ສາມາດປະເມີນໄດ້.
2. ເພີ່ມທະວີເຄື່ອນໄຫວວຽກງານກວດສອບອົງການຈັດຕັ້ງລັດ, ລັດວິສາຫະກິດ, ໂຄງການລົງທຶນຂອງລັດ, ກວດສອບຕາມການຕົກລົງຂອງອົງການກວດສອບແຫ່ງລັດ ແລະ ຄຳສະເໜີຕ່າງໆ ໃຫ້ຄົບຖ້ວນທົ່ວເຖິງ ຕາມທິດຄຸ້ມຄອງລັດດ້ວຍກົດໝາຍຢ່າງເຂັ້ມງວດ.
3. ອົງການກວດສອບປະຈຳພາກເໜືອ 1 ຕ້ອງຜັນຂະຫຍາຍແຜນການການເຄື່ອນໄຫວວຽກງານ 5 ປີ (2026-2030) ເປັນແຜນວຽກຈຸດສຸມຂອງຕົນໃຫ້ລະອຽດ.
4. ສຸມໃສ່ພັດທະນາບຸກຄະລາກອນໃຫ້ມີຄຸນນະພາບ ໂດຍສ້າງນັກກວດສອບຂັ້ນ 1 ໃຫ້ໄດ້ 15 ທ່ານຂຶ້ນໄປ, ຂັ້ນ 2 ໃຫ້ໄດ້ 5 ທ່ານຂຶ້ນໄປ, ຍົກລະດັບດ້ານທິດສະດີການເມືອງ-ການປົກຄອງໃຫ້ໄດ້ 12 ທ່ານ ແລະ ດ້ານວິຊາສະເພາະໃຫ້ໄດ້ 4 ທ່ານ.

**ມາດຕາ 3: ການຈັດຕັ້ງປະຕິບັດ**

1. ມອບໃຫ້ ອົງການກວດສອບປະຈຳພາກເໜືອ 1 ເປັນເຈົ້າການຈັດຕັ້ງປະຕິບັດ ມະຕິສະບັບນີ້ ຢ່າງເຂັ້ມງວດ.



สแกนด้วย CamScanner

2. ມອບໃຫ້ ຄະນະກຳມະການປົກຄອງແຂວງ, ຊີ້ນຳບັນດາພະແນກການ, ອົງການ ແລະ ຄະນະກຳມະການປົກຄອງເມືອງ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ.
3. ມອບໃຫ້ ຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການເສດຖະກິດ, ການເງິນ ແລະ ສິ່ງແວດລ້ອມ, ບັນດາຄະນະກຳມະການ, ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ຕິດຕາມກວດກາ ການຈັດຕັ້ງປະຕິບັດ ມະຕິສະບັບນີ້ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 4: ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາປະຊາຊົນແຂວງ

ເພັງມີລັນ ຄຳພັນເພັງ



สแกนด้วย CamScanner